OK.

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

--------------------

ກະຊວງ ຄົມມະນາຄົມ ຂົນສົ່ງ
ໄປສະນີ ແລະ ກໍ່ສ້າງ

736 [redacted]
ເລກທີ................/ ຄຂປກ
ວັນທີ 21 FEB 2001

# ຄຳສັ່ງແນະນຳ

**ເຖິງ** : ທົ່ວໜ້າ ພະແນກ ຄົມມະນາຄົມ, ຂົນສົ່ງ, ໄປສະນີ ແລະ ກໍ່ສ້າງ ປະຈຳແຂວງ, ກຳແພງນະຄອນ ແລະ ເຂດພິເສດ .

**ເລື່ອງ** : ໃຫ້ຈັດຕັ້ງ ກວດກາ ຄຸ້ມຄອງ ລົດບັນທຸກໜັກ ( ຊັ່ງນ້ຳໜັກ ) ຕະຫຼອດ 24 ຊົ່ວໂມງ.

- ອີງຕາມແຈ້ງການ ຂອງທ່ານລັດຖະມົນຕີ, ຫົວໜ້າຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1037/ຫສນຍ , ລົງວັນທີ 14/06/2000 ກ່ຽວກັບການເຫັນດີ ໃຫ້ກະຊວງ ຄຂປກ ອອກແຈ້ງການ ກ່ຽວກັບ ການຄຸ້ມຄອງລົດບັນທຸກໜັກ .
- ອີງຕາມແຈ້ງການ ເລກທີ 2191/ຄຂປກ, ລົງວັນທີ 04/7/2000 ວ່າດ້ວຍການ ຄຸ້ມຄອງລົດບັນທຸກນ້ຳໜັກເກີນ ຕາມເສັ້ນທາງຫຼວງໃນ ສປປ ລາວ .

ຜ່ານການເກັບກຳສະພາບການເຄື່ອນໄຫວຕົວຈິງຂອງລົດບັນທຸກສິນຄ້າ ໃນຂອບເຂດທົ່ວປະເທດ ຍັງສັງເກດເຫັນວ່າ ມີລົດຈຳນວນໜຶ່ງ ທີ່ບັນທຸກສິນຄ້າໜັກ ເກີນກຳນົດທີ່ທາງກະຊວງ ຄ ຂ ປ ກ ກຳນົດໄວ້ ເຄື່ອນໄຫວເວລາກາງຄືນ ແລະ ເວລາພະນັກງານຊັ່ງນ້ຳໜັກເລີກຈາກໂມງເຮັດວຽກ. ຈາກນັ້ນ, ຍັງເຫັນວ່າ ຂອດກວດກາຂອງເຈົ້າໜ້າທີ່ ຢູ່ຕາມແຕ່ລະດ່ານ ໄດ້ກວດກາຕິດຊັ່ງນ້ຳໜັກລົດບັນທຸກ ຈຳນວນຫຼາຍຄັ້ງໃນເສັ້ນທາງຂົນສົ່ງເສັ້ນດຽວກັນ ເຮັດໃຫ້ການຂົນສົ່ງຊັກຊ້າເສຍເວລາ.

ເພື່ອເຮັດໃຫ້ວຽກງານຄຸ້ມຄອງລົດບັນທຸກໜັກເຂົ້າສູ່ຄວາມເປັນລະບຽບຮຽບຮ້ອຍມີການກວດກາຢ່າງຕໍ່ເນື່ອງ ແລະ ວ່ອງໄວ ເຮັດໃຫ້ສະພາບເສັ້ນທາງ ມີອາຍຸການນຳໃຊ້ຍາວນານ ແລະ ຫຼຸດຜ່ອນທຶນຮອນເຂົ້າໃນການສ້ອມແປງ.

ລັດຖະມົນຕີວ່າການກະຊວງຄົມມະນາຄົມ, ຂົນສົ່ງ, ໄປສະນີ ແລະ ກໍ່ສ້າງ
ອອກຄໍາສັ່ງແນະນໍາດັ່ງນີ້ :

1 . ໃຫ້ຈັດຕັ້ງກວດກາ ຊັ່ງນໍ້າໜັກ ລົດບັນທຸກ ຕະຫຼອດ 24 ຊົ່ວໂມງ.

2. ເພື່ອຮັບປະກັນບໍ່ໃຫ້ມີຫຼາຍຂອດກວດກາໂພດ ແລະ ເພື່ອຄວາມສະດວກ ວ່ອງໄວໃນການກວດກາຂອງດ່ານຕໍ່ໄປ ໃຫ້ກວດກາຊັ່ງນໍ້າໜັກ ຢູ່ຈຸດຕົ້ນທາງ ແລະ ປາຍທາງ ໂດຍບັນທຶກ ຈໍານວນສິນຄ້າ ແລະ ລົງລາຍເຊັນຢັ້ງຢືນຂອງພະນັກງານ ປະຈໍາດ່ານ ລົງໃນໃບບັນທຶກນໍ້າໜັກ, ສ່ວນດ່ານຢູ່ລະຫວ່າງກາງ ໃຫ້ກວດກາເບິ່ງໃບບັນທຶກດັ່ງກ່າວ, ບໍ່ຈໍາເປັນຕ້ອງຕິດຊັ່ງອີກ.

- ຖ້າມີກໍລະນີຜິດສັງເກດ ຫຼື ສົງໄສວ່າລົດບັນທຸກຄັນດັ່ງກ່າວ ມີນໍ້າໜັກບັນທຸກລື່ນຈາກຂໍ້ກໍານົດກົດລະບຽບຂອງກະຊວງ ຄຂປກ ວາງອອກ ໃຫ້ດ່ານກາງທາງກວດກາຄືນໃໝ່ ແລະ ປັບໃໝຕາມລະບຽບຫຼັກການ.

- ຖ້າລົດບັນທຸກຄັນດັ່ງກ່າວຫາກຖືກກວດກາເຫັນວ່າໃບບັນທຶກນໍ້າໜັກຖືກຕ້ອງຕາມຕົ້ນທາງ ແລະນໍ້າໜັກບັນທຸກບໍ່ລື່ນຈາກຂໍ້ກໍານົດກົດລະບຽບຂອງກະຊວງ ຄຂປກ ວາງອອກ ໃຫ້ປ່ອຍໄປ ແລະບໍ່ເກັບເງິນຄ່າຊັ່ງອີກ.

3. ການເກັບເງິນຄ່າຊັ່ງນໍ້າໜັກ ແມ່ນເກັບໃນເວລາມີການຕິດຊັ່ງຢູ່ຈຸດຕົ້ນທາງ ແລະ ປາຍທາງເທົ່ານັ້ນ ສ່ວນການຕິດຊັ່ງ ແລະ ກວດກາໃບບັນທຶກນໍ້າໜັກ ລະຫວ່າງທາງ ທີ່ເຫັນວ່າຖືກຕ້ອງຈະບໍ່ໄດ້ເກັບເງິນອີກ.

ດັ່ງນັ້ນ, ຈຶ່ງອອກຄໍາສັ່ງແນະນໍາສະບັບນີ້ ໃຫ້ກົມຂົນສົ່ງ ເປັນຜູ້ຕິດຕາມ ກວດກາ ແລະ ໃຫ້ບັນດາ ພະແນກ ຄຂປກ ປະຈໍາແຂວງ, ກໍາແພງນະຄອນ ແລະ ເຂດພິເສດ ເປັນຜູ້ຈັດຕັ້ງປະຕິບັດຕາມຄໍາສັ່ງແນະນໍາ ສະບັບນີ້ ຢ່າງເຂັ້ມງວດ.

ລັດຖະມົນຕີວ່າການ

ເພົ້າ ບຸນນະຜົນ